


# ການຈັດຕັ້ງປະຕິບັດແຜນພັດທະນາ ເສດຖະກິດ-ສັງຄົມ ສົກປີ 2015-2016 ແລະ ທິດທາງ ແຜນການປີ 2017ແຂວງວຽງຈັນ

**ສະເໜີໂດຍ:** ທ່ານ ສຸກັນ ວິໄລຣັດ
ຫົວໜ້າພະແນກແຜນການ ແລະ ການລົງທຶນ
ແຂວງວຽງຈັນ

# ເນື້ອໃນການສະເໜີ

1. ແຂວງວຽງຈັນໂດຍຫຍໍ້
2. ການເຊື່ອມສານ SDGs ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງສົກປີ 2015-2016
3. ການຈັດຕັ້ງປະຕິບັດແຜນງານຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ
4. ການຈັດຕັ້ງປະຕິບັດຍຸດທະສາດ ວ່າດ້ວຍ ການເຕີບໂຕສີຂຽວ, ການປ່ຽນແປງຂອງດິນຟ້າອາກາດ ແລະ ການກະກຽມຄວາມພ້ອມເພື່ອຮັບມືກັບໄພພິບັດທາງທໍາມະຊາດຕ່າງໆ
5. ການຮ່ວມມືກັບ ຕ່າງປະເທດ ແລະ ການດຶງດູດການລົງທຶນຂອງພາກເອກະຊົນ
6. ຕີລາຄາຜົນການຈັດຕັ້ງປະຕິບັດ ແລະ ບາງຂໍ້ສະເໜີ
7. ທິດທາງປີ 2017

# ແຂວງວຽງຈັນໂດຍຫຍໍ້

- ແຂວງພາກກາງ ຕິດກັບແຂວງຫຼວງພະບາງ, ແຂວງໄຊສົມບູນ, ນະຄອນຫຼວງວຽງຈັນ ແລະ ແຂວງໄຊຍະບູລີ ແລະ ປະເທດໄທ (ຍາວ 97 ກມ)
- ເນື້ອທີ່ປະມານ 15.927 ກມ2 (ພູສູງ: 2/3; ທົ່ງພຽງ; 1/3)
- ມີ 11 ເມືອງ 433 ບ້ານ: 82.709 ຄົວເຮືອນ (442.159 ຄົນ, ເປັນຍິງ 220.479 ຄົນ)
- ປະກອບດ້ວຍ: ເຜົ່າລາວ: 65,04%, ເຜົ່າກືມມຸ 16,68%, ເຜົ່າມົ້ງ 18,01%
- ຄວາມໜາແໜ້ນ ສະເລ່ຍແມ່ນ 27,7ຄົນ/ກິໂລຕາແມັດ
- ປະຊາກອນ: 80% ອາຊີບກະສິກ□າ (ປູກຝັງ, ລ້ຽງສັດ)

# ການເຊື່ອມສານ SDGs ເຂົ້າໃນແຜນພັດທະນາ ເສດຖະກິດ-ສັງຄົມຂອງແຂວງສົກປີ 2015-2016

- ເຊື່ອມສານ SDGs (17+1) : ເພື່ອບັນລຸເສດຖະກິດມີການຈະເລີນເຕີບໂຕຢ່າງໜັ້ນທ່ຽງ, ດ້ານວັດຖະນາທຳໄດ້ຮັບການປົກປັກຮັກສາແລະເສີມຂະຫຍາຍ, ສັງຄົມມີຄວາມສີວິໄລ ແລະ ສິ່ງແວດລ້ອມມີຄວາມຍືນຍົງ
- ການຂະຫຍາຍຕົວ GDP ບັນລຸ 8,17% ລື່ນແຜນການ 0,7% = 5.795 ຕື້ກີບ, (ເທົ່າກັບ 1.660 ໂດລາສະຫະລັດ/ຄົນ/ປີ)
- ການລົງທຶນຂອງລັດ 453 ໂຄງການ, ມູນຄ່າ 143,17 ຕື້ກີບ (ເປັນທຶນພາຍໃນ 138,34 ຕື້ກີບ, ທຶນຈາກສາຍຕັ້ງປະຕິບັດໂຄງການຢູ່ແຂວງ 55,78 ຕື້ກີບ)
- ເກັບລາຍຮັບເຂົ້າງົບປະມານ = 220,09 ຕື້ກີບ (117,17% ຂອງແຜນການ)
- ປະຕິບັດລາຍຈ່າຍ = 580,59 ຕື້ກີບ (95,68% ຂອງແຜນການ)
- ການແກ້ໄຂຄວາມທຸກຍາກຢູ່ແຂວງວຽງຈັນໃນໄລຍະ 1 ປີຜ່ານມາ ສາມາດຫຼຸດຈຳນວນບ້ານທຸກຍາກລົງໄດ້ 4 ບ້ານ, ຫຼຸດຈຳນວນຄອບຄົວທຸກຍາກໄດ້ 178 ຄອບຄົວ

# ການເຊືອມສານ SDGs ເຂົ້າໃນແຜນພັດທະນາ ເສດຖະກິດ-ສັງຄົມຂອງແຂວງສົກປີ 2015-2016

- ລວມບ້ານພັດທະນາທັງໝົດມີ 206 ບ້ານ ກວມ 47,5% ຂອງຈ□ານວນບ້ານທັງໝົດ, ເພີ່ມຂຶ້ນຈາກເດີມ 16 ບ້ານ,
- ມີຄອບຄົວພັດທະນາ 72.818 ຄອບຄົວ ເທົ່າກັບ 98,62% ຂອງຈຳນວນຄອບຄົວທັງໝົດ, ເພີ່ມຂຶ້ນຈາກປີຜ່ານມາ 1.784 ຄອບຄົວ,
- ບ້ານມີໄຟຟ້າຊົມໃຊ້ແລ້ວກວມ 100% ຂອງບ້ານທັງໝົດ,
- ມີເສັ້ນທາງຄົມມະນາຄົມເຂົ້າເຖິງທົ່ວທຸກບ້ານ ແລະ ສາມາດທຽວໄດ້ຕະຫຼອດປີ 425 ບ້ານ, ເທົ່າກັບ **98%**,
- ອັດຕາການຊົມໃຊ້ນ້ຳສະອາດຂອງປະຊາຊົນໄດ້ກວມເຖິງ 84,8% ຂອງຈຳນວນຄອບຄົວທັງໝົດ, ເທົ່າກັບ100,95% ຂອງແຜນການ,
- ອັດຕາການຊົມໃຊ້ວິດຖ່າຍກວມເອົາ 70,82% ເທົ່າກັບ 98,36% ຂອງແຜນການ. ອັດຕາການເຂົ້າຮຽນລວມຊັ້ນປະຖົມປະຕິບັດໄດ້ 104,9% ແລະ
- ອັດຕາເຂົ້າຮຽນສຸດທິປະຕິບັດໄດ້ 99,49%.
- ວຽກງານເກັບກູ້ລະເບີດບໍ່ທັນແຕກທີ່ຕົກຄ້າງ ເຮັດໄດ້ 2 ເມືອງຄື: ເມືອງຫີນເຫີບ ແລະ ເມືອງກາສີ

# ການຈັດຕັ້ງປະຕິບັດແຜນງານຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ

- ຜະລິດເຂົ້າເປືອກ: 294.834 ໂຕນ (666 ກລ/ຄົນ/ປີ); ຄ້ຳປະກັນສະບຽງອາຫານໄດ້ 152.600 ໂຕນ (350 ກລ/ຄົນ/ປີ)
- ຜະລິດພືດໄດ້ 387.000 ໂຕນ; ຜະລິດ ຊີ້ນ, ປາ, ໄຂ່ ໄດ້ 25.300 ໂຕນ
- ວຽກງານສະໜອງອາຫານເສີມແກ່ເດັກນ້ອຍລຸ່ມ 5 ປີລົງມາ ໃນ 46 ບ້ານຂອງເມືອງ ແມັດ ແລະເມືອງເຟືອງ ຊຶ່ງມີເດັກຂາດສານອາຫານ 2,650 ຄົນ ແລະ ໄດ້ຮັບອາຫານເສີມ ແລ້ວ 1,465 ຄົນ
- ວຽກງານດ້ານໂພສະນາການ: ການຝຶກອົບຮົມກ່ຽວກັບຈຸນລະສານ, ການຕິດຕາມຊຸກຍູ້ ແລະ ປະເມີນພາວະໂພສະນາການຫຼັງເດັກກິນອາຫານເສີມ

# ການຈັດຕັ້ງປະຕິບັດແຜນງານຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ

- ສະພາບດ້ານໂພສະນາການຂອງເດັກນ້ອຍອາຍຸລຸ່ມ 5 ປີ ຢູ່ພາຍໃນແຂວງວຽງຈັນ:
- ເດັກລຸ່ມ 5 ປີຂາດສານອາຫານຊໍາເຮື້ອ(ເຕ້ຍ) ກວມ 27,6% (2020: 34%)
- ເດັກລຸ່ມ 5 ປີ ຂາດສານອາຫານຮຸນແຮງ (ຈ່ອຍ) ກວມ 7,6% (2020: 5%)
- ເດັກລຸ່ມ 5 ປີ ນໍ້າໜັກຕໍ່າກວ່າມາດຕະຖານ ກວມ 16,2% (2020: 17%)
- ອັດຕາສ່ວນເດັກລຸ່ມ 5 ປີເປັນພະຍາດເລືອດຈາງ, ແມ່ຍິງໄວຈະເລີນພັນເປັນພະຍາດເລືອດຈາງ, ເດັກເກີດໃໝ່ນໍ້າໜັກຕໍ່າກວ່າມາດຕະຖານ, ເດັກລຸ່ມ 5 ປີນໍ້າໜັກເກີນມາດຕະຖານ, ການລ້ຽງລູກດ້ວຍນົມແມ່ພຽງຢ່າງດຽວ, ການຂາດສານໄອໂອດິນຂອງເດັກໃນໄວຮຽນ ແມ່ນ ຍັງບໍ່ທັນສາມາດເກັບກໍາຂໍ້ມູນໄດ້ເທື່ອ.

# ການຈັດຕັ້ງປະຕິບັດຍຸດທະສາດເຕີບໂຕສີຂຽວ, ການປ່ຽນແປງຂອງດິນຟ້າອາກາດ ແລະ ການກະກຽມຄວາມພ້ອມເພື່ອຮັບມືກັບໄພພິບັດທາງທຳມະຊາດຕ່າງໆ

- ວຽກງານການຮັກສາແຫຼ່ງນ້ຳຊັບພະຍາ ກອນທຳມະຊາດແມ່ນຖືວ່າແມ່ນວຽກງານບຸລິມະສິດ (ການຄຸ້ມຄອງອ່າງນ້ຳງື່ມ ອ້ອມຮອບດ້ວຍອີກ 4 ແຂວງ)
- ຄຸ້ມຄອງການນຳໃຊ້ຊັບພະຍາກອນທີ່ດິນ, ຄົ້ນຄວ້າສ້າງຖານຂໍ້ມູນທີ່ດິນ, ໄດ້ຄົ້ນຄວ້າອອກໃບຕາດິນ = **2.527** ຕອນ
- ຈັດສັນທີ່ດິນຈຸລະພາກຢູ່ຂັ້ນບ້ານຂອງກຸ່ມບ້ານຜາບ່ອງ, ເມືອງຫີນເຫີບ ໄດ້ຈຳນວນ **10** ບ້ານ
- ຕິດຕາມກວດກາໂຄງການທີ່ອາດຈະເກີດຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມໃນແຂວງວຽງຈັນໄດ້ **81** ກິດຈະການ
- ການກຽມພ້ອມຮັບມືກັບໄພພິບັດທາງທຳມະຊາດ ແມ່ນລິເລີ່ມໃນລະດັບໜຶ່ງ ໂດຍສ້າງຕັ້ງຄະນະກຳມະການຄຸ້ມຄອງໄພພິບັດຂອງແຂວງ ແລະ ເມືອງ ພ້ອມທັງມີການຝຶກອົບຮົມ

# ການຮ່ວມມືກັບ ຕ່າງປະເທດ ແລະ ການດຶງດູດການລົງທຶນຂອງພາກເອກະຊົນ

- ສູ້ຊົນຍາດແຍ້ງ ODA = 275,6 ຕື້ກີບ ຫຼື 34 ລ້ານໂດລາສະຫະລັດ (ຕໍ່ປີ)
- ໃນປີ 2015/2016 ສາມາດຍາດແຍ້ງ ODA = 123 ຕື້ກວ່າກີບ (58 ໂຄງການ)
- ເຫຼືອລ້າ 55 ໂຄງການ = ມູນຄ່າ 109,6 ຕື້ກວ່າກີບ (ເປັນໂຄງການ **INGOs** 39 ໂຄງການ ມູນຄ່າ 15,8 ຕື້ກວ່າກີບ)
- ທຶນກູ້ຢືມ **3** ໂຄງການ = **13,37** ຕື້ກີບ
- ດຶງດູດການລົງທຶນ = 145 ໂຄງການ (ມູນຄ່າ 3.880,20 ຕື້ກີບ)
- ການລົງທຶນໃໝ່ທີ່ຈະເປັນທ່າແຮງມີ ໂຄງການກໍ່ສ້າງໂຮງງານຊີມັງຢູ່ເມືອງຫີນເຫີບ ທີ່ມີມູນຄ່າການລົງທຶນ ເຖິງ 300 ລ້ານໂດລາ
- ການລົງທຶນໃນວຽກງານກິດຈະກຳທົ່ວໄປ ຈຳນວນ 132 ກິດຈະການ ມູນຄ່າ 152 ຕື້ກີບ ແລະ 7,42 ລ້ານໂດລາສະຫະລັດ
- ການລົງທຶນຂອງເອກະຊົນພາຍໃນປະເທດ

# ຕີລາຄາຜົນການຈັດຕັ້ງປະຕິບັດ ແລະ ບາງຂໍ້ສະເໜີ

- **ການເຊື່ອມສານ SDGS:** ກວມລວມເກີນໄປ ຍັງບໍ່ທັນໄດ້ກໍານົດບັນຫາຈຸດສຸມໃຫ້ປະສານສົມທົບກັນໃຫ້ຈະແຈ້ງທີ່ແຂວງໃດຈະສຸມໃສ່ເປັນພິເສດ; ປະສານສົມທົບກັນ ຄົ້ນຄວ້າ ໃຫ້ຈະແຈ້ງ ເປົ້າໝາຍໃດທີ່ແຂວງວຽງຈັນຈະໄດ້ສຸ່ມໃສ່ເປັນພິເສດ
- **ແຜນງານຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ:** ລິເລີ່ມຈັດຕັ້ງປະຕິບັດແລ້ວ, ແຕ່ຍັງບໍ່ທັນເປັນຂະບວນກ້ວາງຂວາງ ດັ່ງນັ້ນຄົ້ນຄວ້າເພີ່ມທຶນຊ່ວຍເຫຼືອ
- **ການເຕີບໂຕສີຂຽວ, ການປ່ຽນແປງຂອງດິນຟ້າອາກາດ ແລະ ການກຽມຄວາມພ້ອມຮັບມືກັບໄພພິບັດ:** ຕັ້ງໜ້າຊ່ວຍເຫຼືອ ແລະ ຊຸກຍູ້ເຊິ່ງກັນ ແລະ ກັນເພື່ອໃຫ້ສາມາດສ້າງແຜນງານລະອຽດ
- **ການຮ່ວມມືກັບຕ່າງປະເທດ ແລະ ການດຶງດູດການລົງທຶນຂອງເອກະຊົນ:** ສ້າງເງື່ອນເພື່ອຍາດແຍ່ງ ການຊ່ວຍເຫຼືອ ແລະ ການລົງທຶນ FDI

# ທິດທາງປີ 2017

- ສູ້ຊົນໃຫ້ GDP ຂະຫຍາຍຕົວ 8,3%, ສະເລ່ຍຕໍ່ຫົວຄົນ 14,48 ລ້ານກີບ ຫຼື ເທົ່າກັບ 1.810 ໂດລາສະຫະລັດ/ຄົນ/ປີ
- ລືບລ້າງຄວາມທຸກຍາກໃຫ້ຍັງເຫຼືອບ້ານທຸກຍາກ 6 ບ້ານ ແລະ 853 ຄອບຄົວ, ສ້າງບ້ານພັດທະນາໃຫ້ໄດ້ 56 ບ້ານ
- ອັດຕາເຂົ້າຮຽນສຸດທິຊັ້ນປະຖົມສຶກສາໃຫ້ບັນລຸໄດ້ 99,6%, ອັດຕາການລອດເຫຼືອຂອງນັກຮຽນ ປໍ1-ປໍ5 ໃຫ້ໄດ້ 91% ແລະ ຫລຸດອັດຕາປະລະການຮຽນຊັ້ນປະຖົມໃຫ້ບັນລຸໄດ້ 1%.
- ສະໜອງນໍ້າສະອາດໃຫ້ປະຊາຊົນໃຫ້ໄດ້ 85%, ເພີ່ມອັດຕາການໃຊ້ວິດຖ່າຍຂອງປະຊາຊົນໃຫ້ໄດ້ 71%, ອັດຕາການສັກຢາ ແລະ ຢອດຢາກັນພະຍາດໃຫ້ແມ່ ແລະ ເດັກນ້ອຍໃຫ້ບັນລຸ 85%.
- ຫລຸດຜ່ອນອັດຕາການຕາຍຂອງເດັກລຸ່ມ 1 ປີໃຫ້ຍັງເຫລືອ 30/1.000 ຄົນ, ຫລຸດຜ່ອນອັດຕາການຕາຍຂອງເດັກລຸ່ມ5ປີໃຫ້ຍັງເຫລືອ 40/1.000ຄົນ, ຫລຸດຜ່ອນອັດຕາການຕາຍຂອງແມ່ໃຫ້ຍັງເຫລືອ 150/100.000 ຄົນ

# ທິດທາງປີ 2017

- ຝຶກອົບຮົມສີມືແຮງງານໃຫ້ໄດ້ 2.500 ຄົນ;
- ສ້າງຄອບຄົວວັດທະນະທຳໃຫ້ໄດ້ 5.000 ຄອບຄົວ , ບ້ານວັດທະນະທຳໃຫ້ໄດ້ 40 ບ້ານ ແລະ ກຸ່ມບ້ານວັດທະນະທຳໄດ້ 2 ກຸ່ມ.
- ສູ້ຊົນເຮັດໃຫ້ນັກທ່ອງທ່ຽວເຂົ້າມາແຂວງໃຫ້ໄດ້ 669.577 ເທື່ອຄົນ, ຄາດຄະເນສາມາດສ້າງລາຍຮັບເຂົ້າໃນສັງຄົມໄດ້ 225 ຕື້ກີບ.
- ຕັ້ງໜ້າຈັດຕັ້ງປະຕິບັດການຈັດສັນທີ່ດິນຢູ່ບັນດາເມືອງຕ່າງໆ ແລະ ອອກໃບຕາດິນໃຫ້ໄດ້ທັງໝົດ6.000 ຕອນໃນທົ່ວແຂວງ.
- ຈັດສັນ, ກຳນົດເຂດຫວງຫ້າມ, ເຂດຄຸ້ມຄອງນຳໃຊ້ ແລະ ເຂດກັນຊົນປ່າປ້ອງກັນ, ປ່າສະຫງວນໃຫ້ໄດ້ 40%; ປູກປ່າເສີມໃຫ້ໄດ້ 45% ຂອງເນື້ອທີ່ປ່າຊຸດໂຊມຂອງ 2 ປະເພດປ່າ, ອະນຸລັກຊີວະນາໆພັນ ແລະ ສັດນ້ຳ-ສັດປ່າທີ່ນອນຢູ່ໃນປ່າສະຫງວນ ແລະ ປ່າປ້ອງກັນໃຫ້ໄດ້ 50%.

# ທິດທາງປີ 2017

- ຄົ້ນຄວ້າ ແລະ ຮ່າງລະບຽບການຄຸ້ມຄອງສິ່ງເສດເຫຼືອ, ຂີ້ເຫຍື່ອທີ່ຖິ່ມສະຊາຍ ແລະ ນ້ຳເສຍທີ່ປ່ອຍລົງແມ່ນ້ຳຕາມຈຸດຕ່າງໆ ແລະ ລົງເຜີຍແຜ່ໃຫ້ໄດ້ 70% ໃນທົ່ວແຂວງ.
- ເປົ້າໝາຍການພັດທະນາແບບຍືນຍົງ SDG ທາງດ້ານຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມ ໃຫ້ມີຄວາມຍືນຍົງຕາມທິດແຫ່ງການເຕີບໂຕສີຂຽວ ແລະ ສ້າງໂຄງການສຶກສາຂໍ້ມູນການນຳໃຊ້ອົກຊີເຈນ, ການນຳໃຊ້ນ້ຳ, ອານຸລັກສັດ ແລະ ພືດ ທີ່ໃກ້ຈະສູນພັນ.

# ຂໍຂອບໃຈ